ບົດຮຽນທີ 6 ສຳລັບ
ສະບາໂຕທີ 7
ກຸມພາ, 2026



# ໝັ້ນໃຈໃນພຣະຄຣິດເທົ່ານັ້ນ



“ເຮົາຕ້ອງການຈະໄດຮູ້ຈັກພຣະອົງ
ແລະ ຮູ້ຈັກຣິດອຳນາດອັນປາກົດ
ໃນການທີ່ພຣະອົງຊົງຄືນພຣະຊົນ
ແລະ ຮ່ວມທຸກກັບພຣະອົງ ຄື
ຍອມຮັບຄວາມຕາຍເໝືອນ
ຢ່າງພຣະອົງ, ເພື່ອຖ້າເປັນໄປໄດ້
ເຮົາກໍຈະໄດ້ເປັນຄືນມາຈາກຕາຍ
ດ້ວຍ”

ຟລປ 3:10, 11,





ຊາວຟີລິບປອຍໄດ້ຮູ້ຫົນທາງແຫ່ງຄວາມລອດແລ້ວ, ດັ່ງທີ່ ອຈ ໂປໂລ ແລະ ທ່ານຊີລາ ໄດ້ບອກຢ່າງຊັດເຈນໃຫ້ແກ່ຜູ້ທີ່ກັບໃຈຄືນທໍາອິດໃນເມືອງນັ້ນ ຜູ້ນັ້ນກໍ່ຄື: ເຈົ້າໜ້າທີ່ຍາມຄຸກ(ກຈກ 16:30-31).

ເມື່ອຄຣິດຕະຈັກໄດ້ຖືກກໍ່ຕັ້ງຢ່າງໝັ້ນຄົງແລ້ວ, ພວກເຂົາກໍ່ຕົກຢູ່ໃນອັນຕະລາຍທີ່ຖືກລໍ້ລວງອອກຈາກທາງແຫ່ງຄວາມລອດ.

ດັ່ງນັ້ນ, ອຈ ໂປໂລ ຈຶ່ງໄດ້ເຕືອນພວກເຂົາເຖິງຫລັກສໍາຄັນແຫ່ງຄວາມລອດໂດຍຄວາມເຊື່ອ



ເຄັດລັບໃນການຫລີກລ້ຽງການສູນເສຍຄວາມລອດ:

- ສິ່ງທີ່ຄວນຫລີກລ້ຽງ (ຟລປ 3:1-3)
- ສິ່ງທີ່ຄວນລະຖິ້ມໄວ້ທາງຫລັງ (ຟລປ 3:4-6)
- ສິ່ງທີ່ສໍາຄັນ (ຟລປ 3:7-8)

ເຄັດລັບໃນການຕັ້ງໝັ້ນຄົງ ຢູ່ໃນຄວາມລອດ:

- ຄວາມໃນຂອງພຣະເຢຊູ (ຟລປ 3:9)
- ການຮູ້ຈັກພຣະເຢຊູ (ຟລປ 3:10-16)

# ເຄັດລັບໃນການຫລີກລ້ຽງການສູນເສຍຄວາມລອດ

# ສິ່ງທີ່ຄວນຫລີກລ້ຽງ

"ຈົ່ງລະວັງພວກໝາ, ຈົ່ງລະວັງພວກທີ່ເຮັດຊົ່ວຮ້າຍ, ຈົ່ງລະວັງພວກຖືການປາດເນື້ອເຖືອໜັງ" (ຟລປ 3:2)

ກ່ອນທີ່ຈະກ່າວເຖິງອັນຕະລາຍທີ່ຄຸກຄາມເຖິງຄວາມເຊື່ອ, ອຈ ໂປໂລ ໄດ້ໃຫ້ຄຳແນະນຳບາງຢ່າງແກ່ພວກເຮົາ: "ຈົ່ງຊື່ນຊົມຍິນດີໃນອົງພຣະຜູ້ເປັນເຈົ້າ" (ຟລປ. 3:1). ແລະ ເພິ່ນຍັງໄດ້ກ່າວເພີ່ມສິ່ງສຳຄັນອີກຄື: ການທີ່ເຮົາຂຽນຊ້ຳຂໍ້ຄວາມ ຊຶ່ງເຮົາໄດ້ຂຽນກ່ອນໜ້ານັ້ນ...ເປັນສິ່ງທີ່ປອດໄພແກ່ພວກເຈົ້າຫລາຍຂຶ້ນ (ຟລປ. 3:1).



- ເພາະຄວາມຮັກອັນໝັ້ນຄົງທີ່ພຣະອົງມີໃຫ້ (ພສສ 31:7)
- ໃຫ້ພວກເຮົາໄວ້ວາງໃຈໃນພຣະອົງ (ພສສ 5:11)
- ຍອມຮັບພຣະຄຸນແຫ່ງຄວາມລອດ (ພສສ 9:14)
- ຮັກສາພຣະບັນຍັດຂອງພຣະເຈົ້າ(ພສສ 119:14; ອຊຢ 58:13, 14)
- ເຊື່ອໃນຄຳສັນຍາຂອງພຣະອົງ (ພສສ 119:162)
- ລ້ຽງດູລູກຫລານໃຫ້ເປັນຄົນດີຕາມຫລັກຄຳສອນຂອງພຣະອົງ(ສພສ. 23:24, 25)

ແລ້ວພວກເຮົາຈະຊື່ນຊົມຍິນດີກັບອົງພຣະຜູ້ເປັນເຈົ້າໄດ້ແນວໃດ?



ອຈ ໂປໂລ ຊີ້ໃຫ້ເຫັນເຖິງອັນຕະລາຍທີ່ຮ້າຍແຮງທີ່ສຸດທີ່ຄຸກຄາມຄຣິດຕະຈັກໃນເວລານັ້ນ ກໍ່ຄື: ຄູສອນປອມ ທີ່ສອນໃຫ້ຄົນຍຶດຕິດກັບພິທີກຳຢ່າງເຄັ່ງຄັດ (ຟລປ. 3:2). ເພິ່ນໄດ້ອ້າງເຖິງພຶດຕິກຳຂອງຄົນເຫລົ່ານັ້ນປຽບຄືກັນກັບ: ໂຕໝາ (ພສສ. 22:16; 2 ປຕ. 2:21-22); ຄົນເຮັດຊົ່ວ; ແລະ ຜູ້ທີ່ປາດເນື້ອເຖືອໜັງ (ໂດຍການເຮັດພິທີຕັດປອມ).



# ຂໍ້ຄິດເພີ່ມເຕີມ: ສິ່ງທີ່ຄວນຫລີກລ້ຽງ

ສິ່ງສຳຄັນທີ່ຄຣິສຕຽນຖືກເອີ້ນໃຫ້ຫລີກລ້ຽງ ແມ່ນ: 1. ການວາງຄວາມຫວັງ ແລະ ຄວາມເປັນພົນລະເມືອງຂອງພວກເຮົາໄວ້ກັບສິ່ງທີ່ຢູ່ໃນໂລກ ຫລື ຄວາມສຳເລັດຂອງໂລກນີ້ ແທນທີ່ຈະວາງຄວາມຫວັງໄວ້ທີ່ພຣະເຢຊູ ແລະ ອານາຈັກສະຫວັນ.

ໃນພຣະຄຳພີ ຟີລິບປອຍ 3:20 ໄດ້ເນັ້ນວ່າ: ການເປັນພົນລະເມືອງທີ່ແທ້ຈິງນັ້ນ ແມ່ນການເປັນພົນລະເມືອງຂອງສະຫວັນ

ສະນັ້ນການນຳໃຊ້ຊີວິດປະຈຳວັນຂອງພວກເຮົາຄວນຈະສະທ້ອນຄວາມຈົງຮັກພັກດີຕໍ່ເຈົ້າຂອງສະຫວັນ ແທນທີ່ຈະໝົກໝຸ້ນຢູ່ກັບຝ່າຍໂລກ.

2: ຄວາມກັງວົນ ແລະ ຄວາມວິຕົກກັງວົນກັບໂລກນີ້, ທ່ານນາງ, ເອເລັນ ຈີ ໄວ໌ ເຕືອນຜູ້ທີ່ອ້າງວ່າຕົນເອງເປັນພົນລະເມືອງຂອງສະຫວັນ ແຕ່ເອົາໂຕເອງໄປຜູກພັນກັບຄວາມທະເຍີທະຍານ ຫລື ອຳນາດຂອງໂລກນີ້ ການເຮັດແບບນີ້ ຈະເຮັດໃຫ້ຕົນເອງອ່ອນແອລົງຝ່າຍຈິດວິນຍານ ສະນັ້ນຄວາມຈົງຮັກພັກດີອັນສູງສຸດຂອງພວກເຮົາຕ້ອງຢູ່ທີ່ເຈົ້າຂອງສະຫວັນ ແລະ ຢູ່ທີ່ອານາຈັກຂອງພຣະເຈົ້າເໜືອສິ່ງໃດໝົດ.

3: ຄວາມປະໝາດຝ່າຍທາງຈິດວິນຍານ, ການເຮັດໂຕຕາມຄ່ານິຍົມຂອງຝ່າຍໂລກອາດເຮັດໃຫ້ພວກເຮົາສູນເສຍຄວາມສົນໃຈທາງດ້ານຊີວິດນິຣັນດອນໄດ້.

4: ການວັດຄວາມສຳເລັດຈາກມາດຕະຖານຂອງມະນຸດ: ຄວາມສຳເລັດທາງໂລກເຊັ່ນ: ອຳນາດ, ຖານະ, ເງິນຄຳ...ມັກຂັດແຍ້ງກັບຄຳສອນຂອງພຣະຄຣິດ ທີ່ເນັ້ນຄວາມອ່ອນນ້ອມຖ່ອມໂຕ.

# ເປັນຫຍັງພວກເຮົາຈຶ່ງຄວນຫລີກລ້ຽງ?

ເພາະສິ່ງເຫລົ່ານັ້ນ ເຮັດໃຫ້: ຄວາມສຸກ, ສັນຕິສຸກ ແລະ ຈຸດປະສົງໃນຊີວິດ ຖືກບ່ຽງເບນອອກໄປຈາກພຣະຄຣິດ.
ການມຸ່ງໝັ້ນທີ່ຈະເປັນພົນລະເມືອງຂອງສະຫວັນ ຈະຊ່ວຍໃຫ້ຊີວິດຂອງພວກເຮົານຳໄປສູ່ ຄວາມຮັກ, ການໃຫ້ອະໄພ, ມີຄວາມເຊື່ອທີ່ໝັ້ນຄົງ, ແລະ ມີຄວາມຈົງຮັກພັກດີຕໍ່ພຣະເຈົ້າ. ແລະ ໃຫ້ພວກເຮົາມີຄວາມກຽມພ້ອມສຳລັບການສະເດັດກັບມາຄັ້ງທີ 2 ຂອງພຣະອົງ ແລະ ມີຊີວິດອັນນິຣັນດອນກັບພຣະອົງ.

# ສິ່ງທີ່ຄວນລະຖິ້ມໄວ້ທາງຫລັງ

“ຄືເມື່ອເຮົາເກີດມາໄດ້ 8 ວັນ, ເຮົາກໍ່ຮັບພິທີຕັດ ເຮົາເປັນຄົນອິດສະຣາເອນໃນຕະກູນເບັນຢາມິນ, ເປັນຄົນເຮັບເຣີເກີດຈາກຊາວເຮັບເຣີ ໃນດ້ານກົດບັນຍັດ ເຮົາກໍຢູ່ໃນຄະນະຟາຣີຊາຍ” (ຟລປ 3:5)

ໃນທີ່ປະຊຸມສະພາຂອງນະຄອນເຢຣູຊາເລັມ, ໄດ້ມີການອອກກົດວ່າ: ຄົນຕ່າງຊາດບໍ່ຄວນຕ້ອງກັງວົນເຖິງເລື່ອງການອອກກົດໝາຍຂອງພິທີກຳຂອງຊາວຢິວ (ກຈກ 15:19-21). ຢ່າງໃດກໍ່ຕາມ, ໄດ້ມີຜູ້ສອນຫລາຍຄົນທີ່ມາຈາກເມືອງຟີລິບປອຍ ແລະ ໄດ້ສອນເຖິງຄວາມຈຳເປັນຂອງການຮັບພິທີຕັດ (ຟລປ. 3:2-3).

ຍ້ອນກັບໄປໃນຊ່ວງເວລານັ້ນ, ອຈ ໂປໂລ ໄດ້ເຕືອນພວກເຂົາວ່າ ຕົວຂອງເພິ່ນເອງນັ້ນສົມບູນແບບພຽງໃດ ຕອນທີ່ລາວຍັງເປັນຄືກັບຜູ້ສອນເຫລົ່ານັ້ນ (ຟລປ. 3:4-6): ເພິ່ນອວດຕົນເອງວ່າ:



ການຮັບພິທີຕັດເມື່ອອາຍຸໄດ້ຄົບ 8 ມື້, ເປັນສິ່ງທີ່ພໍ່ແມ່ທີ່ເຄັ່ງສາສະໜາປະຕິບັດ



ເປັນເຊື້ອສາຍຊາວເຮັບເຣີໂດຍກຳເນີດ; ເປັນເຊື້ອສາຍເບັນຢາມິນອັນບໍລິສຸດ



ເຄັ່ງຄັດໃນກົດບັນຍັດ, ເປັນພວກຟາລີຊາຍຜູ້ເຄັ່ງຄັດ



ໃນດ້ານຄວາມກະຕືລືລົ້ນ, ເພິ່ນກໍ່ໄດ້ຂົ່ມເຫັງຄຣິດຕະຈັກ



ເປັນຜູ້ພິທັກກົດບັນຍັດທີ່ບໍ່ມີບ່ອນຕິ



ແຕ່ເພິ່ນໄດ້ບອກວ່າ ສິ່ງເຫລົ່ານີ້ທີ່ເພິ່ນໄດ້ໂອ້ອວດນັ້ນ ແມ່ນກ່ອນທີ່ເພິ່ນໄດ້ຮູ້ຈັກກັບພຣະເຢຊູ. ຕອນນີ້ລາວໄດ້ຮູ້ແລ້ວວ່າລາວບໍ່ທັນເຂົ້າໃຈພຣະບັນຍັດເລີຍ (ມທ. 5:21-22). ຕອນນີ້ເພິ່ນຮູ້ວ່າ ມີພຽງພຣະເຢຊູເທົ່ານັ້ນທີ່ຊ່ວຍໃຫ້ລອດ(ຟລປ. 3:7).

# ສິ່ງທີ່ຄວນລະຖິ້ມໄວ້ທາງຫລັງ

ອຈ ໂປໂລ ສອນວ່າ: ຜູ້ທີ່ຕ້ອງການເດີນໃນທາງຂອງພຣະຄຣິດຕ້ອງລະຖິ້ມສິ່ງເກົ່າ ແລະ ຄວາມບາບ ເພື່ອມຸ່ງໜ້າໄປສູ່ຊີວິດໃໝ່ໃນພຣະຄຣິດ (ຟລປ 3:13-14)

**ສິ່ງທີ່ຄວນລະຖິ້ມໄວ້ເບື້ອງຫລັງ:**

ບາບ ແລະ ການກະທຳຜິດ
ຄວາມພູມໃຈໃນຄວາມຮູ້ຂອງຕົນເອງ
ຄວາມກັງວົນ ແລະ ສິ່ງທີ່ເປັນພາລະຝ່າຍໂລກທີ່ຖ່ວງດຶງເຮົາໄວ້
ອະດີດທີ່ລົ້ມເຫລວ ແລະ ຄວາມເສຍໃຈ
ຄວາມຄິດ ແລະ ຄ່ານິຍົມຂອງໂລກ

# ສິ່ງທີ່ສຳຄັນ

"ແຕ່ວ່າສິ່ງໃດທີ່ເປັນຄຸນປະໂຫຍດແກ່ເຮົາ ເຮົາຖືສິ່ງນັ້ນວ່າ ເປັນອັນໄຮ້ປະໂຫຍດແກ່ເຮົາແລ້ວ ເພາະເຫັນແກ່ພຣະຄຣິດ" (ຟລປ 3:7)

ອຈ ໂປໂລ ໄດ້ປຽບທຽບຊີວິດໃນອະດີດ ແລະ ໃນປະຈຸບັນ. ດ້ານໜຶ່ງເພິ່ນປຽບທຽບຄວາມຮູ້ທັງໝົດທີ່ເພິ່ນມີ; ອະນາຄົນອັນຮຸ່ງເຮືອງເປັນດັ່ງສິດເອກຂອງຟາລີຊາຍຊື່ທ່ານ: ກາມາລີເອວ (Gamaliel); ແລະ ພອນສະຫວັນອັນຍອດຍ້ຽມທັງໝົດໃນຖານະລູກສິດຂອງຟາລີຊາຍ ນັ້ນແມ່ນຜົນກຳໄລ ແລະ ສິ່ງທີ່ລາວຈະໄດ້ຮັບ

ທ.ກາມາລີເອວ ແມ່ນຄູສອນຂອງພວກຟາລີຊາຍ ເຊິ່ງສອນໃຫ້ຂັດແຍ້ງກັບອັກຄະສາວົກຂອງພຣະເຢຊູ



ຕອນນີ້ເຮົາຈະປຽບທຽບຊີວິດຫລັງຈາກໄດ້ຮູ້ຈັກກັບພຣະເຢຊູຂອງ ອຈ ໂປໂລ. ຜົນກຳໄລທັງໝົດກາຍເປັນສິ່ງໄຮ້ຄ່າ, ເພາະວ່າບໍ່ມີສິ່ງໃດເລີຍສາມາທຽບກັບຄວາມຮັກຂອງພຣະເຢຊູໄດ້ (ຟລປ. 3:7-8).





ແມ່ນຫຍັງຈະລ້ຳຄ່າໄປກວ່າຊີວິດນິຣັນດອນໃນສະຫວັນ ແລະ ໃນໂລກໃໝ່ໄດ້? ແມ່ນແລ້ວຍ້ອນຄ່ານິຍົມຂອງທາງໂລກໄດ້ບົດບັງຄວາມຈິງຂໍ້ນີ້ຈາກຫລາຍໆຄົນ. ມີການແຂ່ງຂັນຍາດຊີງກັນ ໃນສິ່ງທີ່ໂລກເຫັນວ່າມີຄວາມສຳຄັນ ແລະ ສິ່ງທີ່ສະຫວັນຖືວ່າມີຄຸນຄ່າຄວາມສຳຄັນຢ່າງແທ້ຈິງນັ້ນກໍ່ຄື: ການເຮັດຕາມອຸປະນິໄສຂອງພຣະເຢຊູທີ່ໄດ້ວາງເປັນແບບຢ່າງໄວ້ແລ້ວ ແລະ ການຮັກສາຈິດວິນຍານໃຫ້ຢູ່ໃນພຣະອົງຜູ້ໃຫ້ຄວາມລອດ

# ເຄັດລັບແຫ່ງການຕັ້ງໝັ້ນຄົງຢູ່ໃນຄວາມລອດ

# ຄວາມເຊື່ອໃນພຣະເຢຊູ

"ແລະຈະໄດ້ປາກົດຢູ່ໃນພຣະອົງໂດຍບໍ່ມີຄວາມຊອບທຳໃນເຮົາເອງ ຊຶ່ງໄດ້ມາໂດຍກົດບັນຍັດ ແຕ່ມີມາໂດຍຄວມເຊື່ອ ໃນພຣະຄຣິດ ເປັນຄວາມຊອບທຳທີ່ມາຈາກພຣະເຈົ້າ ຊຶ່ງອາໄສຄວາມເຊື່ອ" (ຟລປ 3:9)

ອຈ ໂປໂລໝັ້ນໃຈໃຈຄວາມຊອບທຳຂອງຕົນເອງ ຈຶ່ງໄດ້ເດີນທາງໄປເມືອງດາມັສກັດ ເພື່ອຫວັງຈະນຳຄົນທີ່ເຊື່ອໃນພຣະເຈົ້າໃຫ້ໄດ້ຮັບຄວາມລອດ(ຈາກການບໍ່ຖືກຈັບ) ຖ້າປະຖິ້ມພຣະອົງ. (Acts 9:1-2). ແຕ່ເມື່ອເພິ່ນເຂົ້າໄປເມືອງດາມັສກັດ ເພິ່ນກໍ່ໄດ້ພົບກັບຄວາມຊອບທຳອີກຢ່າງໜຶ່ງນັ້ນກໍ່ຄື ຄວາມຊອບທຳຈາກພຣະເຈົ້າ : "ເຊິ່ງມາຈາກການເຊື່ອໃນພຣະຄຣິດ" (ຟລປ 3:9). ນັ້ນຄືຄວາມລອດທີ່ແທ້ຈິງ

ຈາກຊ່ວງເວລານັ້ນ, ເພິ່ນບໍ່ໄດ້ໝັ້ນໃຈໃນຄວາມຊອບທຳຂອງຕົນເອງອີກເລີຍ. ເພາະການໄວ້ວາງໃຈໃນການກະທຳເພື່ອຄວາມລອດຂອງເຮົາເອງນັ້ນ ໄຮ້ປະໂຫຍດ (ຄລຕ. 2:16).

ເພິ່ນປາຖະໜາທີ່ຈະ "ຢູ່ໃນພຣະຄຣິດ" (ຟລປ. 3:9). ສິ່ງນີ້ໝາຍຄວາມວ່າແນວໃດ?



ໃນພຣະຄຳ 1 ກຣທ 1:30, ການຢູ່ໃນ "ພຣະຄຣິດ" ແມ່ນລວມເຖິງທຸກໆສິ່ງທີ່ປະກອບຂຶ້ນ ເຊິ່ງເປັນແຜນການແຫ່ງຄວາມລອດ ຕັ້ງແຕ່ສະຕິປັນຍາແຫ່ງຈິດວິນຍານ ຈົນໄດ້ຮັບການຊຳລະໃຫ້ມີຄວາມຊອບທຳໂດຍທາງຄວາມເຊື່ອ, ແລະ ການກຽມຕົວສຳລັບສະຫວັນ (ການຊຳລະໃຫ້ບໍຣິສຸດ) ໄປຈົນຮອດການໄດ້ຮັບກຽດໃນວັນທີ່ພຣະເຢຊູໄດ້ສະເດັດກັບຄືນມາ.



# ຄວາມເຊື່ອໃນພຣະເຢຊູ

ຄວາມເຊື່ອໃນພຣະເຢຊູ ແມ່ນຫົວໃຈຂອງຄຣິດສຕຽນ. ຄວາມເຊື່ອບໍ່ແມ່ນແຕ່ພຽງແຕ່ການເຊື່ອວ່າພຣະອົງຊົງພຣະຊົນຢູ່ ແຕ່ວ່າເປັນການໄວ້ວາງໃຈໃນພຣະອົງຢ່າງສົມບູນແບບ ແລະ ຍອມເດີນຕາມພຣະອົງໃນທຸກໆດ້ານຂອງຊີວິດ.

ຄວາມເຊື່ອແມ່ນພະລັງທີ່ເຮັດໃຫ້ພວກເຮົາໄດ້ຮັບຄວາມຊອບທຳ

ຄວາມເຊື່ອເຮັດໃຫ້ພວກເຮົາເຕີບໂຕ ແລະ ມີຊີວິດອັນບໍຣິສຸດ

ຄວາມເຊື່ອເປັນຈຸດເລີ່ມຕົ້ນຂອງການເຝົ້າລໍຄອຍການສະເດັດກັບມາຄັ້ງທີສອງຂອງພຣະອົງ

ສະນັ້ນ ເຮົາລອງມາກວດສອບຄວາມເຊື່ອຂອງພວກເຮົາວ່າ: ພວກເຮົາເຊື່ອຢ່າງແທ້ຈິງຫລືບໍ່? ແລະ ຄວາມເຊື່ອຂອງພວກເຮົາພາເຮົາລະຖິ້ມຄວາມບາບຂອງພວກເຮົາແລ້ວຫລືບໍ່?

# ການຮູ້ຈັກພຣະເຢຊູ

"ເຮົາຕ້ອງການທີ່ຈະຮູ້ຈັກພຣະອົງ ແລະ ຮູ້ຈັກຣິດອຳນາດອັນປາກົດ ໃນການທີ່ພຣະອົງຊົງຄືນພຣະຊົນ ແລະ ຮ່ວມທຸກກັບພຣະອົງ ຄືຍອມຮັບຄວາມຕາຍເໝືອນຢ່າງພຣະອົງ" (ຟລປ 3:10)

## ພວກເຮົາຈະຮູ້ຈັກພຣະຄຣິດໄດ້ແນວໃດ (ຟລປ. 3:10-16)?







- ຕອນທີ່ເຮົາຮຽນພຣະຄຳຂອງພຣະອົງ
- ຕອນທີ່ພຣະວິນຍານບໍຣິສຸດຊົງນຳພວກເຮົາ
- ຕອນທີ່ພວກເຮົາທົນທຸກກັບພຣະອົງ
- ເມື່ອເຮົາຮ່ວມໃນເປົ້າໝາຍດຽວກັນກັບພຣະອົງ



ຊີວິດຄຣິດຕຽນກໍ່ຄືກັບການແຂ່ງຂັນ. ພວກເຮົາຕ້ອງມີເປົ້າໝາຍທີ່ຊັດເຈນຢູ່ໃນຈິດໃຈ ພວກເຮົາບໍ່ໄດ້ມີຊີວິດຢູ່ເພື່ອຄວາມເພີດເພີນຂອງຊີວິດເທົ່ານັ້ນ ແຕ່ມີຄວາມຫວັງທີ່ຈະໄປເຖິງການຟື້ນຄືນຈາກຄວາມຕາຍ (ຟລປ. 3:11).

ຈົນກວ່າເວລານັ້ນຈະມາເຖິງ, ພວກເຮົາພະຍາຍາມທີ່ຈະ "ບາກບັ່ນ-ຍຶດໝັ້ນຄືກັນກັບທີ່ພຣະເຢຊູຍຶດໝັ້ນແລະຮັບພວກເຮົາໄວ້ເປັນຂອງພຣະອົງ"
(ຟລປ 3:12 ). ພຣະເຢຊູຊົງຮັບພວກເຮົາໄວ້ ເພື່ອທີ່ຈະປະທານລາງວັນ; ທີ່ເປັນນິຣັນໃຫ້ ຄືການໄດ້ຢູ່ກັບພຣະອົງ (ຣລ. 11:10; ຟລປ. 3:14; 1 ທສລນກ 4:17).



# ການຮູ້ຈັກພຣະເຢຊູ

ການຮູ້ຈັກກັບພຣະເຢຊູຢ່າງແທ້ຈິງ ແມ່ນກະແຈທີ່ສຳຄັນຂອງຊີວິດຄຣິດສຕຽນ. ບໍ່ແມ່ນພຽງແຕ່ຮູ້ຈັກຊື່ ຫລື ເລື່ອງລາວຂອງພຣະອົງເທົ່ານັ້ນ ແຕ່ເປັນການເຂົ້າໃຈ ແລະ ເຮັດຕາມ ພຣະລັກສະນະນິໄສ, ນ້ຳພຣະໄທ ແລະ ພາລະກິດຂອງພຣະອົງ ຈົນຊີວິດຂອງພວກເຮົາໄດ້ສະທ້ອນເຖິງຄວາມຮັກ ແລະ ຄວາມບໍຣິສຸດ ຂອງພຣະອົງອອກມາ. ພວກເຮົາຄວນໄຝ່ຫາການຮູ້ຈັກກັບພຣະອົງຜ່ານທາງ ການອ່ານພຣະຄຳພີ, ອະທິຖານ ແລະ ປະຕິບັດຕາມນ້ຳພຣະໄທຂອງພຣະອົງ.

ທີ່ສຳຄັນພວກເຮົາຄວນຮູ້ວ່າ: ພຣະເຢຊູຊົງນຳພວກເຮົາໄປສູ່ຄວາມລອດ ແລະ ບໍ່ມີນາມຊື່ອື່ນໃດໃນໂລກນີ້ທີ່ ຈະຊ່ວຍພວກເຮົາໃຫ້ໄດ້ຮັບຄວາມລອດ.

“ຈຸດປະສົງອັນຍິ່ງໃຫຍ່ທີ່ພັກດັນໃຫ້ອັກຄະສາວົກໂປໂລກ້າວໄປຂ້າງໜ້າ ທ່າມກາງຄວາມຍາກລໍາບາກ ແລະ ອຸປະສັກ. ສິ່ງນີ້ ຄວນຈະເປັນໜຶ່ງສິ່ງທີ່ພັກດັນຜູ້ເຮັດວຽກຮັບໃຊ້ພຣະເຈົ້ານັ້ນເຂົ້າສູ່ການອຸທິດຕົນເອງຢ່າງເຕັມທີ່ໃນການຮັບໃຊ້ພຣະອົງ. ອາດຈະມີສິ່ງລໍ້ໃຈທາງໂລກທີ່ເຂົ້າມາດຶງດູດຄວາມສົນໃຈຂອງ ອຈ ໂປໂລ ອອກຈາກພຣະຜູ້ຊ່ວຍໃຫ້ລອດ ແຕ່ເພິ່ນຕ້ອງມຸ່ງນ້າໄປສູ່ເປົ້າໝາຍ ເພື່ອສະແດງໃຫ້ເຫລົ່າທູດສະຫວັນ, ແລະ ມະນຸດໄດ້ເຫັນເຖິງຄວາມຄຸ້ມຄ່າກັບຄວາມພະຍາຍາມ ແລະ ການເສຍສະຫລະທັງໝົດ ເພື່ອໃຫ້ພາລະກິດທາງຄວາມຫວັງນີ້ບັນລຸຜົນ.,

ແມ້ແຕ່ສາວົກຜູ້ທີ່ຕໍ່າຕ້ອຍທີ່ສຸດຂອງພຣະຄຣິດ ກໍໄດ້ເປັນຜູ້ຢູ່ໃນສະຫວັນ, ເປັນທາຍາດຂອງພຣະເຈົ້າໃນມໍລະດົກທີ່ບໍ່ເຊື່ອມສະຫລາຍ.